**ເງື່ອນໄຂເຂົ້າຮ່ວມໂຄງການ ສໍາລັບ PFIs**

| ເງື່ອນໄຂ | ຕົວຊີ້ວັດ |
|---|---|
| 1. ຄວາມສົນໃຈຫຼາຍ ໃນການປ່ອຍເງິນກູ້ ເພື່ອສົ່ງເສີມ MSME ເຊິ່ງເປັນເປົ້າໝາຍ ຂອງໂຄງການ (ວົງເງິນກູ້ຍ່ອຍຕໍ່າກວ່າ 500 ລ້ານກີບ) | 1. ມີແຜນຍຸດທະສາດ ແລະ ແຜນທຸລະກິດ ຢ່າງຈະແຈ້ງ ທີ່ມີການສຸມໃສ່ ການປ່ອຍເງິນກູ້ໃຫ້ແກ່ MSME ເຊິ່ງເປັນເປົ້າໝາຍຂອງໂຄງການ (ວົງເງິນກູ້ຍ່ອຍບໍ່ກາຍ 500 ລ້ານກີບ) |
| | 2. ມີຄວາມພ້ອມໃນການຮັບເອົາການສະໜັບສະໜູນ ເພື່ອປັບປຸງວິທີວິທະຍາຂອງການ ປ່ອຍກູ້ໃຫ້ແກ່ MSMEs ແລະ ປັບປຸງລະບົບການບໍລິຫານສິນເຊື່ອ (ລວມ ທັງນະໂຍ ບາຍ, ຂະບວນການ, ບົດແນະນໍາ ແລະ ແບບຟອມຕ່າງໆ ທີ່ກ່ຽວຂ້ອງກັບການປ່ອຍກູ້), ຖ້າເຫັນວ່າຈໍາເປັນ |
| | 3. ຮັບໄດ້ກ່ຽວກັບ ການລົງຕິດຕາມ ແລະ ການລົງກວດກາຢູ່ພາກສະໜາມ ຢ່າງເປັນປະຈໍາ ໃນລະດັບຂັ້ນສະຖາບັນການເງິນ ແລະ ຂັ້ນລູກຄ້າ MSMEs ທີ່ກ່ຽວຂ້ອງ ໂດຍ ຫຼື ໃນນາມ ອົງການ KfW. |
| | 4. ສະໜອງຂໍ້ມູນຢູ່ພາກສະໜາມກ່ຽວກັບເງິນກູ້ຍ່ອຍທີ່ປ່ອຍໃຫ້ແກ່ MSMEs ທີ່ລົງທຶນໂດຍທຶນຂອງກອງທຶນ ກສທ ແລະ ສະຖານະດ້ານການເງິນຂອງ PFI ຢ່າງເປັນປົກກະຕິ |
| 2. ປະສົບການ ແລະ ມີລະດັບຄວາມສາມາດໃນການປ່ອຍກູ້ຕໍ່ | 1. ມີປະສົບການໃນການປ່ອຍກູ້ໃຫ້ແກ່ MSMEs ໃນ ສປປ ລາວ ຢ່າງໜ້ອຍໜຶ່ງປີ |
| | 2. ມີຄວາມສາມາດໃນການປ່ອຍກູ້ຕໍ່ອອກໄປໃນຈໍານວນເງິນ 15 ຕື້ກີບ ສໍາລັບທະນາຄານ (5 ຕື້ກີບ ສໍາລັບ ສກຈຣ) ໃຫ້ແກ່ MSMEs ພາຍໃນໄລຍະເວລາ ສອງປີ. |
| 3. ສາມາດປະຕິບັດໄດ້ຕາມລະບຽບການ ດ້ານຄວາມໝັ້ນຄົງ | 1. ໄດ້ຮັບໃບອະນຸຍາດຈາກ ທຫລ |
| | 2. ຮັບໄດ້ກ່ຽວກັບການລົງຕິດຕາມຢ່າງເປັນປະຈໍາຂອງ ທຫລ |
| | 3. ສາມາດປະຕິບັດຕາມລະບຽບການດ້ານຄວາມໝັ້ນຄົງຂອງ ທຫລ |
| | 4. ສາມາດປະຕິບັດພັນທະດ້ານການກວດສອບພາຍນອກໄດ້ |
| | 5. ສາມາດສະໜອງໄດ້ພັນທະດ້ານການລາຍງານ |
| | 6. ມີມາດຕະຖານການບັນຊີ ແລະ ຂະບວນການຄວບຄຸມພາຍໃນ ທີ່ສາມາດເຮັດໃຫ້ມີການຕິດຕາມໄດ້ທຶນເງິນກູ້ຈາກກອງທຶນ ກສທ ແລະ ການນໍາໃຊ້ທຶນດັ່ງກ່າວ |
| 4. ມີນະໂຍບາຍສິນເຊື່ອ ແລະ ການດໍາເນີນງານດ້ານສິນເຊື່ອທີ່ເປັນມືອາຊີບ ແລະ ໂປ່ງໃສ | 1. ມີວິທີວິທະຍາ ການປ່ອຍເງິນກູ້ ທີ່ມີປະສິດທິຜົນ |
| | 2. ມີຂະບວນການບໍລິຫານຄວາມສ່ຽງທີ່ເໝາະສົມ |
| | 3. ບໍ່ມີການຖືມຂູມ ແລະ ມີການນໍາໃຊ້ອັດຕາດອກເບ້ຍຕາມກົນໄກຕະລາດ. |
| | 4. ອັດຕາສ່ວນໜີ້ຊັກຊ້າ ຫຼື NPL ຢູ່ໃນລະດັບບໍ່ເກີນ 5% |
| | 5. ອັດຕາສ່ວນຄວາມພຽງພໍຂອງທຶນ ຢ່າງໜ້ອຍ 10.5% (ສໍາລັບທະນາຄານ) ຫຼື 12% (ສໍາລັບ ສກຈຣ) |
| | 6. ລະດັບຜົນການປະຕິບັດງານສູງກວ່າລະດັບສະເລ່ຍຂອງຂະແໜງການ |
| 5. ມີການປະຕິບັດງານການບໍລິການດ້ານການເງິນທີ່ມີຄວາມຮັບຜິດຊອບ | ມີນະໂຍບາຍຂອງສະຖາບັນກ່ຽວກັບການນໍາໃຊ້ຫຼັກການ ການປົກປ້ອງລູກຄ້າ ແລະ ສອດຄ່ອງກັບຂໍ້ກໍານົດ ແລະ ກົດລະບຽບ ກ່ຽວກັບການປົກປ້ອງຜູ້ຊົມໃຊ້ການບໍລິການດ້ານການເງິນ |